ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຊື່ເຈົ້າຂອງໂຄງການ: ອົງການກາແດງແຫ່ງຊາດລາວ

ເລກທີ: 1022 /ກຄລ

ນະຄອນຫລວງວຽງຈັນ,ວັນທີ: 29.08.2025.

# ໜັງສືແຈ້ງເຊີນປະມູນ

1. ອົງການກາແດງແຫ່ງຊາດລາວ ໄດ້ຮັບອະນຸມັດ ງົບປະມານ ລາຍຮັບເກີນແຜນ ປີ 2024 ຂອງ ກະຊວງ ການເງິນ ເພື່ອດຳເນີນການຈັດຊື້ສິນຄ້າ ເຊັ່ນ : ເຄື່ອງຮັບໃຊ້ທາງການແພດ ແລະ ເຄື່ອງບຳລຸງ, ດ້ວຍການດຳເນີນການປະມູນແບບເປີດກ້ວາງ. ຄະນະກຳມະການການປະມູນຈັດຊື້ເຄື່ອງຮັບໃຊ້ທາງການແພດ ແລະ ເຄື່ອງບຳລຸງ ສຳລັບວຽກງານເລືອດປະຈຳປີ 2025 ໃຫ້ ສະຖາບັນເລືອດແຫ່ງຊາດ ແລະ ສູນເລືອດແຂວງທົ່ວປະເທດ,

   ຂໍເຊີນ ບັນດາບໍລິສັດ/ວິສາຫະກິດ/ຮ້ານ ທີ່ສົນໃຈ ແລະ ມີຄຸນນະວຸດທິເໝາະສົມ ເຂົ້າຍື່ນຊອງປະມູນ ສຳລັບສະໜອງສິນຄ້າເຊັ່ນ: ເຄື່ອງຮັບໃຊ້ທາງການແພດ ແລະ ເຄື່ອງບຳລຸງ ໂດຍແບ່ງເປັນສອງພູດຄື:

   **ພູດທີ 01:** ເຄື່ອງຮັບໃຊ້ທາງການແພດ ສຳລັບ ສະຖາບັນເລືອດແຫ່ງຊາດ ແລະ ສູນເລືອດແຂວງທົ່ວປະເທດ. ໄລຍະການຈັດສົ່ງແມ່ນ ຊ້າສຸດບໍ່ໃຫ້ເກີນ 1 ເດືອນ.

   **ພູດທີ 02:** ເຄື່ອງບຳລຸງ ສຳລັບ ສະຖາບັນເລືອດແຫ່ງຊາດ ແລະ ສູນເລືອດແຂວງທົ່ວປະເທດ, ໄລຍະການຈັດສົ່ງແມ່ນ ຊ້າສຸດບໍ່ໃຫ້ເກີນ 1 ເດືອນ.

2. ການປະມູນຈະດຳເນີນຕາມຂັ້ນຕອນການປະມູນແບບເປີດກວ້າງທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ: 0477/ກງ, ລົງວັນທີ 13 ກຸມພາ 2019.

3. ການປະມູນນີ້ ອະນຸຍາດໃຫ້ທຸກ ບໍລິສັດ/ວິສາຫະກິດ/ຮ້ານ ທີ່ມີຄຸນນະວຸດທິເໝາະສົມ, ມີໃບອະນຸຍາດດຳເນີນທຸລະກິດຖືກຕ້ອງຕາມກົດໝາຍທີ່ກ່ຽວພັນກັບການສະໜອງສິນຄ້າ, ອຸປະກອນ ແລະ ການບໍລິການທີ່ຕ້ອງການ ແລະມີໃບຢັ້ງຢືນການເສຍພັນທະອາກອນເປັນປົກກະຕິຕາມລະບຽບການຂອງຂະແໜງການສ່ວຍສາອາກອນ;

4. ບັນດາບໍລິສັດ/ວິສາຫະກິດ/ຮ້ານ ທີ່ມີຄຸນນະວຸດທິເໝາະສົມ ສົນໃຈສາມາດຕິດຕໍ່ພົວພັນເອົາເອກະສານປະມູນໄດ້ທີ່ ສະຖາບັນເລືອດແຫ່ງຊາດ ອົງການກາແດງແຫ່ງຊາດລາວ ຕຶກ 4ຊັ້ນ, ຢູ່ຊັ້ນ4 ບ້ານຊຽງຍືນ ເມືອງ ຈັນທະບູລີ ນະຄອນຫລວງວຽງຈັນ, ໂທລະສັບ : 021 218922, 22230353, 28034992, ອີເມວ chanthala2010@gmail.com,ແລະ ກວດກາເບິ່ງເອກະສານປະມູນໄດ້ທີ່ ຕາມທີ່ຢູ່ຂ້າງເທິງໃນວັນເວລາລັດຖະການ.

5. ບັນດາບໍລິສັດ/ວິສາຫະກິດ/ຮ້ານໃດ ທີ່ຕ້ອງການຊື້ເອກະສານປະມູນ ພູດທີ 1 ແລະ ພູດທີ 2 ແມ່ນໃຫ້ມາພົວພັນເອົາ ຕາມທີ່ຢູ່ຂ້າງເທິງໃນວັນເວລາລັດຖະການ ເລີ່ມຂາຍແຕ່ວັນທີ 01/09/2025 ເປັນຕົ້ນໄປ. ຊອງປະມູນ ພູດທີ 1: ລາຄາ 1,500,000ກີບ/ຊອງ ແລະ ຊອງປະມູນພູດ 2: ລາຄາ 500,000 ກີບ/ຊອງ, ວິທີການຊຳລະຕ້ອງຈ່າຍເປັນເງິນສົດ.

6. **ຊອງປະມູນ ພູດທີ 01**: ຕ້ອງສົ່ງກ່ອນເວລາ 14:00 ໂມງ ຂອງວັນທີ: 06/10/2025. ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ. ຊອງປະມູນທຸກໆຊອງແມ່ນຈະປິດຮັບແລະເປີດຊອງໃນເວລາ 14:00ໂມງ, ຂອງວັນທີ: 06/10/2025;

7. **ຊອງປະມູນ ພູດທີ 02**: ຕ້ອງສົ່ງກ່ອນເວລາ 15:00 ໂມງ ຂອງວັນທີ: 06/10/2025. ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ. ຊອງປະມູນທຸກໆຊອງແມ່ນຈະປິດຮັບແລະເປີດຊອງໃນເວລາ 15:00ໂມງ, ຂອງວັນທີ: 06/10/2025, ຊອງປະມູນທັງສອງພູດ ແມ່ນຈະເປີດຊອງຂຶ້ນທີ່ ຫ້ອງປະຊຸມ ສະຖາບັນເລືອດແຫ່ງຊາດ ອົງການກາແດງແຫ່ງຊາດລາວ ຕຶກໃໝ່ (ຊັ້ນ 4) ສະຖານທີ່ຕັ້ງຢູ່: ບ້ານ ຊຽງຍືນ, ເມືອງຈັນທະບູລີ, ນະຄອນຫລວງວຽງຈັນ (ເຂດທາດດຳ). ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມນຳ.

8. ບັນດາບໍລິສັດ-ວິສາຫະກິດ-ຮ້ານ ທີ່ສົນໃຈເຂົ້າຮ່ວມການປະມູນຕ້ອງປະກອບແບບຟອມໃຫ້ຄົບຖ້ວນຕາມເອກະສານເງື່ອນໄຂທີ່ໄດ້ກຳນົດໄວ້ຢ່າງຖືກຕ້ອງ ແລະຄົບຖ້ວນ.

9. ດັ່ງນັ້ນຈຶ່ງແຈ້ງມາຍັງ ບັນດາບໍລິສັດ-ວິສາຫະກິດ-ຮ້ານ ທີ່ສົນໃຈເຂົ້າຮ່ວມການປະມູນຊາບ.

**ຫົວໜ້າຫ້ອງການອົງການກາແດງແຫ່ງຊາດລາວ**

ອົງການກາແດງແຫ່ງຊາດລາວ ຫ້ອງການ

ຊອງຈັນ ຈັນທະວົງ